ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 151/ຫກ
ນະຄອນຫຼວງວຽງຈັນ, ວັນທີ 15 ກໍລະກົດ 2026

ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາວິສາຫະກິດ ແລະ ບໍລິສັດ ທັງຫຼາຍ.

ເລື່ອງ: ເຂົ້າຮ່ວມການປະມູນການສະໜອງເຄື່ອງຈັກຮັບໃຊ້ວຽກງານວິຊາສະເພາະ ໃຫ້ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການຈັດຊື້, ເຄື່ອງຈັກ ການໃຊ້ບໍລິການດ້ວຍທຶນຂອງ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 919/ທຫລ, ລົງວັນທີ 23 ຕຸລາ 2013.

ຫ້ອງການ,ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາວິສາຫະກິດ ແລະ ບໍລິສັດທີ່ສະໜອງເຄື່ອງຈັກກ່ຽວຂ້ອງ ຊາບວ່າ: ທຫລ ມີຈຸດປະສົງຈະຈັດຊື້ເຄື່ອງຈັກຮັບໃຊ້ວຽກງານວິຊາສະເພາະ ຈຳນວນ 2 ເຄື່ອງ ເພື່ອຮັບໃຊ້ວຽກງານວິຊາສະເພາະຂອງ ທຫລ

ສະນັ້ນ, ທຫລ ຈຶ່ງແຈ້ງມາຍັງບັນດາວິສາຫະກິດ ແລະ ບໍລິສັດ ທີ່ສະໜອງເຄື່ອງຈັກດັ່ງກ່າວ ເຂົ້າຮ່ວມໃນການປະມູນ ໂດຍພາກສ່ວນກ່ຽວຂ້ອງທີ່ຈະເຂົ້າຮ່ວມຕ້ອງມີມາດຕະຖານ-ເງື່ອນໄຂ ເບື້ອງຕົ້ນ ດັ່ງລຸ່ມນີ້:

I. ໄລຍະທີ 1 ຂັ້ນຕອນຂາຍຊອງປະມູນ: ຜູ້ທີ່ຈະສາມາດຊື້ຊອງປະມູນໄດ້ຕ້ອງມີເງື່ອນໄຂຄົບຖ້ວນຄື:

1. ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ແລະ ນຳໃຊ້ໄດ້ໃນປັດຈຸບັນ;

2. ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025;

3. ມີໃບຢັ້ງຢືນຖານະການເງິນ ຫຼື ຍອດເຫຼືອເງິນຝາກ ຈາກທະນາຄານທຸລະກິດໃດໜຶ່ງ ແລະ ໃນລາຍງານບັນຊີສຳຮອງປ້ອນຫຼັງ 3 ເດືອນ (ເດືອນ 4-6 ປີ 2026);

4. ມີໃບຈົດລິຂະສິດເຄື່ອງຈັກປະເພດດັ່ງກ່າວ ຈາກໂຮງງານຜູ້ຜະລິດ ແລະ ໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຈາກກະຊວງອຸດສາຫະກຳ ແລະ ການຄ້າ;

5. ມີປະສົບການໃນການດຳເນີນທຸລະກິດກ່ຽວຂ້ອງ ຫຼື ອື່ນໆ ທີ່ຕິດພັນ ຢ່າງໜ້ອຍ 3 ປີ ຂຶ້ນໄປ, ມີຜົນງານໃນການສະໜອງເຄື່ອງຈັກປະເພດດັ່ງກ່າວໃນໄລຍະຜ່ານມາ ເພື່ອນຳສະເໜີຕໍ່ຄະນະຮັບຜິດຊອບກ່ຽວຂ້ອງ (ມີເອກະສານຢັ້ງຢືນມາພ້ອມ).

ສຳລັບມາດຕະຖານ ແລະ ຄຸນສົມບັດໃນການໃຊ້ງານຂອງເຄື່ອງຈັກກ່ຽວຂ້ອງໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້.

ໝາຍເຫດ: ບໍລິສັດທີ່ຈະເຂົ້າຮ່ວມຊື້ຊອງປະມູນຕ້ອງປະກອບ ແລະ ສຳເນົາເອກະສານຕາມ 5 ລາຍການ ຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ ທຫລ ຈຶ່ງຈະຂາຍຊອງປະມູນໃຫ້ໄດ້. ສຳລັບມູນຄ່າຊື້ຊອງປະມູນ ແມ່ນລາຄາ 2,000,000 ກີບ/ຊອງ, ຊຶ່ງມູນຄ່າດັ່ງກ່າວຈະບໍ່ຖືກສົ່ງຄືນ ບໍ່ວ່າກໍລະນີໃດໆ.

Scanned with CamScanner

II. ໄລຍະທີ 2 ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວ ຕ້ອງປະຕິບັດຕາມຂັ້ນຕອນການ ປະມູນຄື:

1. ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນຕາມທີ່ລະບຸໄວ້ໃນເອກະສານ (TOR);

2. ສຳລັບມື້ເປີດຊອງປະມູນ ທຫລ ຈະແຈ້ງການຕາມພາຍຫຼັງ ແລະ ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ເອກະສານກ່ຽວຂ້ອງຕາມເງື່ອນໄຂທີ່ກຳນົດໄວ້ຂອງຕົນມາພ້ອມ) ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນລາຄາ ຂອງແຕ່ລະພາກສ່ວນພ້ອມກັນ ຊ່ອງໜ້າກັບຄະນະກຳມະການກ່ຽວຂ້ອງ;

3. ຖ້າໄດ້ຮັບການຄັດເລືອກ ຈະໄດ້ເຊັນສັນຍາຮ່ວມວຽກກັນ;

4. ບໍລິສັດທີ່ຊະນະການປະມູນຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການຈັດສົ່ງເຄື່ອງຈັກດັ່ງກ່າວໃຫ້ ສາຂາ ທຫລ ຊຽງຂວາງ ແລະ ສະຫວັນນະເຂດ.

ບັນດາວິສາຫະກິດ ແລະ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພົວພັນຊື້ຊອງປະມູນ ຢູ່ພະແນກບໍລິຫານ, ຫ້ອງການ ທຫລ, ຕັ້ງຢູ່ບ້ານຊຽງຢືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ໝາຍເລກໂທລະສັບ 020 56 654 196 ເລີ່ມແຕ່ວັນທີ 15 ກໍລະກົດ 2026 ຫາ 10 ສິງຫາ 2026.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາວິສາຫະກິດ ແລະ ບໍລິສັດ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ພານຸສັກ ແກ່ນວົງພະຈັນ

Scanned with CamScanner

ມາດຕະຖານເຕັກນິກ ແລະ ເງື່ອນໄຂຄວາມຕ້ອງການ
ເຄື່ອງຈັກກວດນັບ-ຄັດໄຈ້ທະນະບັດ ຂອງ ທຫລ

1. ຕ້ອງແມ່ນເຄື່ອງຈັກກວດນັບ-ຄັດໄຈ້ທະນະບັດ ຍີ່ຫໍ້ Glory UW f-8 ທີ່ຜະລິດຈາກປະເທດຍີ່ປຸ່ນ;
2. ສາມາດກວດນັບ-ຄັດແຍກທະນະບັດດີ ແລະ ເສື່ອມຄຸນອອກຈາກກັນໄດ້, ກວດຈັບທະນະບັດປອມ, ປົນ ແລະ ສາມາດລຽງໜ້າໄດ້, ມີຊ່ອງຮອງນັບທີ່ຜ່ານການກວດນັບ-ຄັດໄຈ້ ຈຳນວນ 08 ຊ່ອງ;
3. ຕ້ອງມີລະບົບຊ່ອບແວທີ່ຮອງຮັບການພັດທະນາການປ່ຽນແປງຮູບແບບທະນະບັດ, ສາມາດບັນທຶກຂໍ້ມູນ ແລະ ເພີ່ມຂໍ້ມູນທະນະບັດ ສະກຸນຕ່າງໆ (ລວມທັງທະນະບັດຮຸບແບບໃໝ່ຢ່າງໜ້ອຍ 10 ສະກຸນພ້ອມກັນ);
4. ມີຄວາມໄວໃນການກວດນັບ-ຄັດໄຈ້ທະນະບັດຢ່າງໜ້ອຍ 1,000ໃບ/ນາທີ ແລະ ສາມາດເຮັດວຽກໄດ້ຢ່າງຕໍ່ເນື່ອງຢ່າງໜ້ອຍ 08 ຊົ່ວໂມງ;
5. ເປັນເຄື່ອງຈັກທີ່ບໍ່ລະເມີດລິຂະສິດຂອງພາກສ່ວນໃດໜຶ່ງ ທັງພາຍໃນ ແລະ ຕ່າງປະເທດ;
6. ສາມາດອ່ານ ແລະ ບັນທຶກເລກໝາຍທະນະບັດ (ເລກຊີຣີ) ໂດຍສະເພາະທະນະບັດສະກຸນຫຼັກໆ ເຊັ່ນ: LAK, USD, THB, CNY;
7. ສາມາດບັນທຶກລາຍງານປະຫວັດການເຮັດວຽກຂອງເຄື່ອງຈັກ ເປັນຕົ້ນ: ບັນທຶກຈຳນວນການກວດນັບ-ຄັດໄຈ້ ປະຈຳວັນ, ເດືອນ ແລະ ປີ;
8. ຜູ້ສະໜອງຕ້ອງມີສູນໃຫ້ບໍລິການ ແລະ ຊ່າງຜູ້ຊຳນານງານດ້ານເຄື່ອງຈັກເປັນອັນສະເພາະພາຍໃນປະເທດ ກໍລະນີເຄື່ອງຈັກມີບັນຫາໃຫ້ເຂົ້າມາກວດເຊັກໄດ້ທັນສະພາບການໂດຍກຳນົດໄລຍະເວລາ ຢູ່ ທຫລ ປະຈຳພາກ ພາຍໃນ 72 ຊົ່ວໂມງ;
9. ກໍລະນີມີການພັດທະນາ ຫຼື ອອກແບບທະນະບັດຮຸບແບບໃໝ່ ທັງສະກຸນເງິນພາຍໃນ ແລະ ຕ່າງປະເທດ ບໍລິສັດ ທີ່ຊະນະການປະມູນຕ້ອງສາມາດພັດທະນາ ແລະ ຕິດຕັ້ງຊ່ອບແວໃຫ້ສຳເລັດພາຍໃນ 6 ເດືອນໂດຍບໍ່ມີຄ່າໃຊ້ຈ່າຍໃດໆ.

Scanned with CamScanner